ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 005/ທຄຕລ 2021
ນະຄອນຫຼວງວຽງຈັນ, ວັນທີ: 27 AUG 2021

# ໜັງສືຊີ້ແຈງ

**ຮຽນ:** ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືຮຸ້ນຢູ່ ທຄຕລ ທີ່ນັບຖື;

**ເລື່ອງ:** ຊີ້ແຈງກ່ຽວກັບການເປີດເຜີຍເອກະສານລາຍງານການເງິນປະຈຳ 06 ເດືອນຕົ້ນປີ 2021 ລ່າຊ້າ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 28 ມັງກອນ 2019;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;
- ອີງຕາມ ແຈ້ງການກ່ຽວກັບການປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ສະບັບເລກທີ 0009/ຄຄຊ ລົງວັນທີ 25 ພຶດສະພາ 2020.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ອີງຕາມລະບຽບການທີ່ກ່ຽວຂ້ອງ ທຄຕລ ຕ້ອງເປີດເຜີຍຂໍ້ມູນເອກະສານລາຍງານການເງິນປະຈຳ 06 ເດືອນຕົ້ນປີ 2021 ພາຍໃນວັນທີ 27 ສິງຫາ 2021. ແຕ່ໃນພາກປະຕິບັດຕົວຈິງ ທຄຕລ ບໍ່ສາມາດເປີດເຜີຍເອກະສານລາຍງານການເງິນດັ່ງກ່າວໄດ້ຕາມກຳນົດເວລາ ດ້ວຍສາເຫດມາຈາກຜົນກະທົບຂອງການແຜ່ລະບາດຂອງພະຍາດ COVID-19 ຮອບ 2 ທີ່ແກ່ຍາວຮອດປະຈຸບັນ ສົ່ງຜົນເຮັດໃຫ້ມີຄວາມຫຍຸ້ງຍາກ ແລະ ບໍ່ມີຄວາມຄ່ອງຕົວເທົ່າທີ່ຄວນໃນການດຳເນີນເຄື່ອນໄຫວວຽກງານຂອງທຸກຂະແໜງການ.

ຕໍ່ບັນຫາດັ່ງກ່າວ ທຄຕລ ກຳລັງສຸມໃສ່ແກ້ໄຂດ້ວຍຄວາມຮັບຜິດຊອບສູງ ເຊິ່ງຄາດວ່າຈະສາມາດເປີດເຜີຍເອກະສານລາຍງານການເງິນດັ່ງກ່າວ ຊ້າສຸດບໍ່ໃຫ້ກາຍວັນທີ 03 ກັນຍາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຂໍອະໄພມານະທີ່ນີ້ດ້ວຍ.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫຼວງວຽງຈັນ

ລຳພຸດ ສິດທິລາດ